# ລັດຖະບານ ເນັ້ນໃຫ້ ຄຕຟງ ສຸມໃສ່ 4 ວຽກຕົ້ນຕໍ




ຄະນະກຳມະການແຫ່ງຊາດເພື່ອຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (ຄຕຟງ) ໄດ້ຈັດກອງປະຊຸມສະໄໝສາມັນຄັ້ງທີ I ປະຈຳປີ 2019 ເພື່ອປຶກສາຫາລືຫຼາຍບັນຫາ ທີ່ຕິດພັນກັບວຽກງານຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍຂອງ ສປປ ລາວ ໃນວັນທີ 21 ມິຖຸນາ 2019 ທີ່ ທະນາຄານແຫ່ງ ສປປ ລາວ (ທຫລ) ນະຄອນຫຼວງວຽງຈັນໂດຍການເປັນປະທານຂອງທ່ານ ສົມດີ ດວງດີ ຮອງນາຍົກລັດຖະມົນຕີ, ປະທານ ຄຕຟງ; ພ້ອມນີ້ກໍ່ມີທ່ານ ສອນໄຊ ສິດພະໄຊ ຜູ້ວ່າການ ທຫລ, ຮອງປະທານ ຄຕຟງ ແລະ ມີສະມາຊິກ ຄຕຟງ ທີ່ມາຈາກບັນດາກະຊວງ-ອົງການຕ່າງໆເຂົ້າຮ່ວມ.

ກອງປະຊຸມ ໄດ້ປຶກສາຫາລືຫຼາຍບັນຫາ ທີ່ມີຄວາມສຳຄັນຕິດພັນກັບວຽກງານຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍຂອງ ສປປ ລາວ ເປັນຕົ້ນແມ່ນຄວາມຄືບໜ້າໃນການແກ້ໄຂຂໍ້ບົກຜ່ອງ ແລະ ແຜນການກະກຽມການປະເມີນຮອບດ້ານ ສປປ ລາວໃນປີ 2020-2021; ພ້ອມນັ້ນ, ຍັງລາຍງານຄວາມຄືບໜ້າໃນການຈັດຕັ້ງປະຕິບັດມະຕິກອງປະຊຸມໃນຄັ້ງກ່ອນໂດຍສະເພາະການສ້າງກົນໄກສືບສວນ-ສອບສວນທາງດ້ານການເງິນ; ການດຳເນີນການປະເມີນຄຸ້ມຄອງຕາມຄວາມສ່ຽງດ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍຂອງຫົວໜ່ວຍທີ່ມີໜ້າທີ່ລາຍງານ ແລະການພົວພັນສາກົນກ່ຽວກັບວຽກງານການຕ້ານການຟອກເງິນ ແລະ ສະໜອງທຶນແກ່ການກໍ່ການຮ້າຍ (AML/CFT). ນອກນັ້ນ, ຍັງຮັບຮອງເອົາແຜນການກະກຽມການປະເມີນຮອບດ້ານຂອງວຽກງານຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍໃນປີ 2020 ຂອງ ສປປ ລາວ; ແຜນການກອບການຮ່ວມມືກັບຜູ້ຄຸ້ມຄອງ ແລະ ພາກສ່ວນດຳເນີນຄະດີ ໂດຍສະເພາະຂະແໜງການທີ່ມີຄວາມສ່ຽງຕໍ່ວຽກງານການຕ້ານການຟອກເງິນ ແລະ ການຊ່ວຍເຫຼືອຈາກສາກົນໃນການສະໜອງແຫຼ່ງທຶນເຂົ້າໃນການສ້າງຄວາມສາມາດໃຫ້ແກ່ເຈົ້າໜ້າທີ່ ທີ່ກ່ຽວຂ້ອງກັບວຽກງານການຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ.



ໃນຜ່ານມາ; ລັດຖະບານລາວແມ່ນໄດ້ມີຄວາມພະຍາຍາມເລັ່ງໃສ່ຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍໃນຫຼາຍຮູບແບບ ແລະ ຮັບຜົນຄືບໜ້າດ້ວຍດີຕະຫຼອດມາ ເຮັດໃຫ້ ສປປ ລາວ ໄດ້ອອກຈາກບັນຊີສີເທົາ ມາຢູ່ໃນບັນຊີປົກກະຕິຂອງອົງການຕ້ານການຟອກເງິນສາກົນ ແລະ ໃນກອງປະຊຸມສະໄໝສາມັນຄັ້ງທີ II ປະຈຳປີ 2018 ຄັ້ງຜ່ານມາໄດ້ຕີລາຄາສູງຕໍ່ຜົນສຳເລັດວຽກງານການປະເມີນຄວາມສ່ຽງລະດັບຊາດຕ້ານການຟອກເງິນ ແລະ ສະໜອງທຶນແກ່ການກໍ່ການຮ້າຍຄັ້ງທຳອິດຂອງ ສປປ ລາວ, ພ້ອມທັງຮັບຮອງເອົາແຜນປະຕິບັດງານ ເພື່ອແກ້ໄຂຄວາມສ່ຽງຈາກຜົນການປະເມີນທີ່ໄດ້ຮັບ ແລະ ຮັບຮູ້ຜົນຄວາມຄືບໜ້າໃນການຈັດຕັ້ງປະຕິບັດວຽກງານຕ້ານການຟອກເງິນ ແລະ ສະໜອງທຶນແກ່ການກໍ່ການຮ້າຍ ໂດຍສະເພາະການຂະຫຍາຍກົນໄກການຮ່ວມມືລະຫວ່າງອົງການສືບສວນ-ສອບສວນ, ຜູ້ຄຸ້ມຄອງຫຼືໜ່ວຍທີ່ມີໜ້າທີ່ລາຍງານ ແລະ ສຳນັກງານຂໍ້ມູນຕ້ານການຟອກເງິນ ເພື່ອໃຫ້ສາມາດມີຂໍ້ມູນ ແລະ ການເຂົ້າເຖິງແຫຼ່ງຂໍ້ມູນຂອງບັນດາພາກສ່ວນຕ່າງໆນຳໄປເຖິງການດຳເນີນຄະດີອາສະຍາກຳທີ່ເປັນຄວາມຜິດຕົ້ນຂອງການຟອກເງິນໃຫ້ມີປະສິດທິຜົນຍິ່ງຂຶ້ນພ້ອມກັບການສ້າງເຄືອຂ່າຍການຮ່ວມມືລະຫວ່າງອົງກອນທີ່ກ່ຽວຂ້ອງໃຫ້ກວ້າງອອກ.

ທັງໝົດນີ້ ກໍ່ເພື່ອຮັບປະກັນບໍ່ໃຫ້ ສປປ ລາວ ຕົກຢູ່ໃນການຕິດຕາມຂອງສາກົນກ່ຽວກັບ ວຽກງານ AML/CFT ແລະ ກະກຽມໃຫ້ແກ່ການປະເມີນສປປ ລາວຮອບດ້ານກ່ຽວກັບວຽກງານ AML/CFT (Mutual Evaluation "ME") ໃນປີ 2020 ທັງນີ້ກໍ່ເພື່ອເຮັດໃຫ້ລະບົບເສດຖະກິດ-ການເງິນມີຄວາມເປັນລະບຽບຮຽບຮ້ອຍ, ມີຄວາມເຂັ້ມແຂງ, ໝັ້ນຄົງ ແລະ ເຊື່ອມໂຍງກັບພາກພື້ນ ແລະ ສາກົນ.

**# ຂ່າວ-ພາບ: ຣັດສະໝີ ດວງສັດຈະ**

**ຊາດພັດທະນາ ພາເສດຖະກິດກ້າວໄກ ພ້ອມກັນນຳໃຊ້ເງິນກີບ**